SIOUDOMPHAN et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 103 - 113

# ການວິເຄາະການເພິ່ງພາ ແລະ ຄວາມໄດ້ປຽບທາງການຄ້າລະຫວ່າງປະເທດຂອງ ສປປ ລາວ ກັບ ສປ ຈີນ ພາຍໃຕ້ສະຖານະການ ການລະບາດຂອງພະຍາດໂຄວິດ 19

**ສຸດຖາວອນ ສີອຸດົມພັນ *, ຄຳສອນ ສອນໄຊ, ສິມບັດ ພິມມະນີ ແລະ ລັດຕະນາ ອິນທະວິຈິດ**

*ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ*

***ຕິດຕໍ່ພົວພັນ:**

*ສຸດຖາວອນ ສີອຸດົມພັນ*
*ພາກວິຊາເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ,*
*ເບີໂທ: +856 20 2222 3325,*
*ອີເມວ:*
*siouomphansoutthavone@gmail.com*

*ຂໍ້ມູນບົດຄວາມ:*
*ການສົ່ງບົດຄວາມ: 28 ມັງກອນ 2022*
*ປັບປຸງສຳເລັດ: 04ມີນາ 2022*
*ການຕອບຮັບ: 25 ມີນາ 2022*

**ບົດຄັດຫຍໍ້**

ໃນການສຶກສາຫົວຂໍ້ "ການວິເຄາະການເພິ່ງພາ ແລະ ຄວາມໄດ້ປຽບທາງການຄ້າລະຫວ່າງປະເທດຂອງ ສປປ ລາວ ກັບ ສປ ຈີນ ພາຍໃຕ້ສະຖານະການ ການລະບາດຂອງພະຍາດໂຄວິດ 19". ຂໍ້ມູນທີ່ໃຊ້ໃນການສຶກສາແມ່ນຂໍ້ມູນທຸຕິຍະພູມ ແລະ ການວິເຄາະຂໍ້ມູນແມ່ນນຳໃຊ້ດັດສະນີການເພິ່ງພາທາງການຄ້າ (TD) ແລະ ດັດສະນີຄວາມໄດ້ປຽບໂດຍປຽບປຽບ (RCA) ເຂົ້າໃນການວິເຄາະການເພິ່ງພາ ແລະ ຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າຂອງ ສປປ ລາວ ກັບ ສປ ຈີນ, ໄດ້ນຳໃຊ້ Multiple Regression Analysis ດ້ວຍວິທີການຄາດປະມານແບບວິທີກຳລັງສອງນ້ອຍສຸດ ແລະ ໄດ້ນຳໃຊ້ແບບຈຳລອງອະນຸກົມເວລາ ໂດຍຜ່ານໂປຣແກຣມທາງສະຖິຕິ SPSS version 20 ໃນການຫາຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການເພິ່ງພາທາງການຄ້າ ແລະ ເພື່ອພະຍາກອນການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ.

ຜົນການສຶກສາພົບວ່າ ສປປ ລາວ ມີການເພິ່ງພາທາງການຄ້າກັບ ສປ ຈີນ ໂດຍສະເລ່ຍຢູ່ທີ່ 29.94%  ໃນນັ້ນການເພິ່ງພາດ້ານການສົ່ງອອກ ໂດຍສະເລ່ຍຢູ່ທີ່ 15.34% ແລະ ການເພິ່ງພາດ້ານການນຳເຂົ້າ ໂດຍສະເລ່ຍຢູ່ທີ່ 14.60%. ໃນການວິເຄາະຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກສິນຄ້າ ແມ່ນມີ 9 ປະເພດສິນຄ້າທີ່ມີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກ ເຊິ່ງປະກອບດ້ວຍ: ແຮ່ທາດ, ສັດລ້ຽງ, ທັນຍາພືດ, ກ໊າສທຳມະຊາດ, ພືດຜັກຕ່າງໆ, ໝາກໄມ້ ແລະ ຖົ່ວ, ກາເຟ ແລະ ຊາ, ຢາງພາລາ, ໄມ້ ແລະ ຜະລິດຕະພັນໄມ້; ສ່ວນການສົ່ງອອກເຄື່ອງຈັກ ແລະ  ອຸປະກອນໄຟຟ້າ  ແມ່ນມີຄວາມເສຍປຽບໂດຍປຽບທຽບ. ສຳລັບປັດໄຈທີ່ມີຜົນຕໍ່ການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ມີ 5 ປັດໄຈຄື: ລວມຍອດຜະລິດຕະພັນພາຍໃນຂອງ ສປປ ລາວ (GDP) ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ຫຼຸດລົງ;  ມູນຄ່າການລົງທຶນຂອງ ສປ ຈີນ ໃນ ສປປ ລາວ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ຫຼຸດລົງ ແລະ ມູນຄ່າການລົງທຶນຕ່າງປະເທດໃນ ສປປ ລາວ ສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ລຸດລົງ ດ້ວຍລະດັບຄວາມເຊື່ອໝັ້ນ 99% ; ອັດຕາແລກປ່ຽນເງິນຕາຕ່າງປະເທດ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ເພີ່ມຂຶ້ນ; ອັດຕາເງິນເຟີ້ ສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ເພີ່ມຂຶ້ນ ດ້ວຍລະດັບຄວາມເຊື່ອໝັ້ນ 95%.  ພ້ອມດຽວກັນນີ້ ສປປ ລາວ ມີແນວໂນ້ມການເພິ່ງພາທາງການຄ້າໃນອະນາຄົດ ແຕ່ປີ 2021-2025 ໃນພາວະຂະຫຍາຍຕົວແບບຕໍ່ເນື່ອງ ແລະ ເພີ່ມຂຶ້ນໃນທຸກໆປີ ໂດຍຄາດວ່າຈະເພີ່ມຂຶ້ນຈາກ 31.61%  ໃນປີ 2021 ມາເປັນ 33.86% ໃນປີ 2025, ໃນນັ້ນ ແນວໂນ້ມການສົ່ງອອກສິນຄ້າໄປ ສປ ຈີນ ກໍ່ມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີເຊັ່ນກັນຄື: ຈາກການເພິ່ງພາການສົ່ງອອກໃນອັດຕາ 17.40% ໃນປີ 2021 ຄາດວ່າ ຈະເພີ່ມຂຶ້ນເປັນ 19.99% ໃນປີ 2025, ໃນຂະນະທີ່ແນວໂນ້ມການເພິ່ງພາການນຳເຂົ້າສິນຄ້າຈາກ ສປ ຈີນ ແມ່ນມີທ່າອ່ຽງເພີ່ມຂຶ້ນໃນລະດັບຄົງທີ່ແຕ່ລະປີຄື: 16.22% ຕໍ່ປີ.

**ຄຳສັບສຳຄັນ:** *ການເພິ່ງພາທາງການຄ້າ, ດັດສະນີຄວາມໄດ້ປຽບໂດຍປຽບທຽບ ແລະ ປັດໄຈທາງເສດຖະກິດ*

# Analysis of the Dependencies and Trade Advantages between Lao PDR and China under the Status of the COVID-19

**Soutthavone SIOUDOMPHAN*, Khamsone SONESAI, Sombath PHOMMANY and Lattana INTHAVICHIT**

*Faculty of Economics and Tourism, Souphanouvong University, Lao PDR*

***Correspondence:***
*Soutthavone SIOUDOMPHAN, Department of Commerce, Faculty of Economics and Tourism, Souphanouvong University,*
*Tel: +856 2022223325,*
*Email: sioudomphansoutthavone@gmail.com*

***Article Info:***
*Submitted: Jan 28, 2022*
*Revised: Mar 04, 2022*
*Accepted: Mar 25, 2022*

## Abstract

This research aims to analyze the dependencies and trade advantages between the Lao PDR and China under the status of the COVID-19. The data was analyzed using Multiple Regression Analysis to find the important factors affecting trade dependencies and to force the trade dependencies between Lao PDR and China in the future.

The results of this study revealed that the Lao PDR had an average trade dependency with China of 29,94 percent. In addition, the average export dependency was 15,34 percent, and the average import dependency was 14.60 percent. Minerals, livestock, cereals, natural gas, vegetables, fruits, beans, coffee, tea, rubber, and wood products are among the 9 types of goods that have comparative advantages in exports, while the export of machinery and electrical equipment is relatively disadvantageous. The factors that affect trade dependencies between Lao PDR and China include five factors, such as: GDP of Laos will result in a decrease in trade dependence between Lao PDR and China; the value of China investment in Lao PDR will result in an increase in trade dependence between Lao PDR and China; the value of foreign investment in Lao PDR will result in an increase in trade dependence between Lao PDR and China with the confidence level of 99%; the foreign exchange rate result in an increase in trade dependence between Lao PDR and China; and the inflation will result in an increase in trade dependence between Lao PDR and China with a confidence level of 99%. At the same time, the trend of trade dependency between Lao PDR and China will increase in the future. The trade in the 2021–2025 period will experience continuous growth and increase every year, expected to increase from 31.61 percent in 2021 to 33.86 percent in 2025, while the trend of exports to China is also increasing, such as the export dependence rate of 17,40 percent in 2021, which is expected to increase to 19.99 percent in 2025, while the dependence trend on imports from China is likely to increase at a steady rate of 16.22 percent per year.

**Keyword**: *Trade dependence, comparative advantage index, economic factors.*

## 1. ພາກສະເໜີ

ຈາກທິດສະດີ ແລະ ແນວຄວາມຄິດກ່ຽວກັບການເພິ່ງພາອາໄສຕ່າງປະເທດ ໄດ້ອະທິບາຍເຖິງຄວາມສຳພັນທາງເສດຖະກິດ ແລະ ສັງຄົມ ທີ່ບໍ່ເທົ່າທຽມກັນລະຫວ່າງປະເທດທີ່ໃຊ້ລະບົບເສດຖະກິດແບບທຶນນິຍົມທີ່ພັດທະນາແລ້ວ ແລະ ປະເທດທີ່ກຳລັງ ຫຼື ດ້ອຍພັດທະນາ. ຄວາມສຳພັນຂອງສອງປະເທດດັ່ງກ່າວ ເປັນລັກສະນະເພິ່ງພາອາໄສ (Dominant Dependent) ລະຫວ່າງປະເທດທີ່ມີຖານະ ແລະ ຄວາມສາມາດທາງເສດຖະກິດ-ສັງຄົມທີ່ແຕກຕ່າງກັນນີ້ ໄດ້ກໍ່ໃຫ້ເກີດສະພາວະເສດຖະກິດຂອງປະເທດທີ່ພັດທະນາແລ້ວ ສາມາດຂະຫຍາຕົວເພີ່ມຂຶ້ນໄດ້; ໃນຂະນະດຽວກັນ ເສດຖະກິດຂອງປະເທດທີ່ເພິ່ງພາອາໄສ ຫຼື ປະເທດທີ່ກຳລັງພັດທະນາ ບໍ່ສາມາດຂະຫຍາຍຕົວໄດ້ ຫຼື ຈະຂະຫຍາຍເພີ່ມຂຶ້ນໄດ້ ກໍ່ເປັນພຽງແຕ່ການສົ່ງຜົນສະທ້ອນຂອງການຂະຫຍາຍຕົວຂອງຄວາມຈະເລີນກ້າວໜ້າທາງເສດຖະກິດຂອງປະເທດທີ່ພັດທະນາແລ້ວເທົ່ານັ້ນ. ການເພິ່ງພາອາໄສ ໄດ້ແກ່ສະຖານະການໜຶ່ງ ທີ່ສະພາວະເສດຖະກິດຂອງປະເທດໜຶ່ງ ຕົກຢູ່ພາຍໃຕ້ເງື່ອນໄຂຂອງການພັດທະນາ ແລະ ການຈະເລີນເຕີບໂຕທາງເສດຖະກິດຂອງປະເທດອື່ນ ເຊິ່ງສະພາວະເສດຖະກິດຂອງປະເທດທຳອິດຕ້ອງຂຶ້ນຢູ່ກັບຄວາມສຳພັນຂອງການເພິ່ງພາອາໄສເຊິ່ງກັນ ແລະ ກັນ ລະຫວ່າງພາວະເສດຖະກິດຂອງສອງປະເທດ ຫຼື ຫຼາຍກວ່າສອງປະເທດຂຶ້ນໄປ ແລະ ລະຫວ່າງເສດຖະກິດຂອງປະເທດເລົ່ານີ້ກັບພາວະເສດຖະກິດການຄ້າຂອງໂລກ ຈະມີການເພິ່ງພາອາໄສກໍ່ຕໍ່ເມື່ອບາງປະເທດມີຄວາມສາມາດສູງກວ່າ, ມີເສດຖະກິດຂະຫຍາຍຕົວ ແລະ ມີຄວາມສາມາດກຸ້ມຕົນເອງໄດ້. ໃນຂະນະດຽວກັນ ປະເທດອື່ນໆທີ່ເພິ່ງພາອາໄສສາມາດປະຕິບັດສິ່ງດັ່ງກ່າວໄດ້ພຽງແຕ່ການໄດ້ຮັບຜົນສະທ້ອນຂອງການຂະຫຍາຍຕົວທາງເສດຖະກິດເທົ່ານັ້ນ ເຊິ່ງສາມາດເປັນໄປໄດ້ທັງແງ່ບວກ ແລະ ແງ່ລົບຕໍ່ການພັດທະນາທາງເສດຖະກິດ ແລະ ການຄ້າລະຫວ່າງປະເທດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດໜຶ່ງທີ່ກຳລັງພັດທະນາ, ພື້ນຖານການຜະລິດແມ່ນອີງໃສ່ກະສິກຳເປັນສ່ວນໃຫຍ່, ການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມຂອງລາວຂະຫຍາຍຕົວຊ້າຍ້ອນບໍ່ມີຊາຍແດນຕິດກັບທະເລ, ພາຍຫຼັງທີ່ລັດຖະບານລາວໄດ້ຫັນປ່ຽນລະບົບເສດຖະກິດແບບລວມສູນມາເປັນລະບົບເສດຖະກິດຕະຫຼາດ ໃນປີ 1986 ເປັນຕົ້ນມາ, ຈຶ່ງຈຳເປັນຕ້ອງມີການພົວພັນທາງການຄ້າກັບບັນດາປະເທດເພື່ອນບ້ານທີ່ມີຊາຍແດນຕິດກັບບັນດາປະເດທອາຊຽນເຊັ່ນ: ປະເທດໄທ, ປະເທດມຽນມາ, ປະເທດຫວຽດນາມ, ປະເທດກຳປູເຈຍ ແລະ ປະເທດຈີນ. ເຊິ່ງໃນປັດຈຸບັນ ສປ ຈີນ ໄດ້ກາຍເປັນປະເທດທີ່ມີການລົງທຶນອັນດັບທີໜຶ່ງ ແລະ ເປັນຄູ່ຄ້າອັນດັບທີສອງຂອງ ສປປ ລາວ. ເຊິ່ງ ສປປ ລາວ ແລະ ມີຄວາມສຳພັນທີ່ດີຕໍ່ກັນກັນມາຍາວນານ ແລະ ຕໍ່ເນື່ອງ, ມີການຮ່ວມມືກັນໃນການພັດທະນາທາງດ້ານຕ່າງໆ ລວມເຖິງການຊ່ວຍເຫຼືອດ້ານສິນຄ້າ ແລະ ການລົງທຶນ. ເຊິ່ງການຮ່ວມມືດັ່ງກ່າວໄດ້ຜັກດັນສົ່ງເສີມໃຫ້ມີແຜນການພັດທະນາເສດຖະກິດຮ່ວມກັນ ເພື່ອເຮັດໃຫ້ການຄ້າ ແລະ ການລົງທຶນຂອງທັງສອງປະເທດ ມີການຈະເລີນເຕີບໂຕຢ່າງວ່ອງໄວ. ນອກຈາກນີ້ ສປປ ລາວ ຍັງໄດ້ຮັບເຊີນໃຫ້ເຂົ້າຮ່ວມງານວາງສະແດງສິນຄ້າຕ່າງໆທີ່ປະເທດຈີນຢ່າງຕໍ່ເນື່ອງ ຈຶ່ງເຮັດໃຫ້ການຄ້າມີການຂະຫຍາຍຕົວ ແລະ ສປ ຈີນ ຍັງກຳນົດໂຄຕ່າການນຳເຂົ້າສິນຄ້າປະເພດເຂົ້າຈາກ ສປປ ລາວ ໄວ້ຕາມເງື່ອນໄຂຂອງ WTO ຢູ່ທີ່ 8,000 ໂຕ່ນ/ປີ. ເຊິ່ງກ່ອນໜ້ານີ້ ສປປ ລາວ ໄດ້ກຳນົດມູນຄ່າການຄ້າລະຫວ່າງປະເທດໃນປີ 2020 ໄວ້ທີ່ 13,037 ລ້ານດອນລາສະຫະລັດ ຕໍ່ມາໃນການກອງປະຊຸມສະໄໝສາມັນຄັ້ງທີ 9 ຂອງສະພາແຫ່ງຊາດຊຸດທີ 8 ເຊິ່ງຈັດຂຶ້ນໃນເດືອນກໍລະກົດ 2020 ໄດ້ປັບມູນຄ່າການຄ້າລະຫວ່າງປະເທດລົງເປັນ 11,951 ລ້ານດອນລາສະຫະລັດ ເນື່ອງຈາກຜົນກະທົບຈາກການລະບາດຂອງພະຍາດໂຄວິດ 19. ເຊິ່ງໃນປີ 2020 ສປປ ລາວ ມີມູນຄ່າການສົ່ງອອກ 4,276 ລ້ານດອນລາສະຫະລັດ ຄິດເປັນ 70.8% ຂອງແຜນດັດແກ້ (6,039 ລ້ານດອນລາສະຫະລັດ) ແລະ ມູນຄ່າການນຳເຂົ້າ 3,824 ລ້ານດອນລາສະຫະລັດ ຄິດເປັນ 64.68% ຂອງແຜນດັດແກ້ (5,912 ລ້ານດອນລາສະຫະລັດ) ແລະ ເກີນດຸນການຄ້າ 454 ລ້ານໂດລາສະຫະລັດ. ອັນເປັນຜົນເນື່ອງມາຈາກ ໃນປີ 2020 ສປ ຈີນ ໄດ້ມີການລຸດອັດຕາພາສີນຳເຂົ້າຈາກ ສປປ ລາວ ເຫຼືອ 0% ສຳລັບສິນຄ້າທີ່ ສປປ ລາວ ສົ່ງອອກໄປ ສປ ຈີນ ໃນຈຳນວນ 8,256 ລາຍການ ເຊິ່ງຄິດເປັນ 97% ຂອງສິນຄ້າທີ່ລາວສົ່ງອອກໄປຈີນທັງໝົດ. ປັດຈຸບັນ ສປ ຈີນ ໄດ້ມີໂຄງການລົງທຶນໃນ ສປປ ລາວ ທັງໝົດ 785 ໂຄງການ ລວມມູນຄ່າ 12,000 ລ້ານດອນລາສະຫະລັດ ປະກອບດ້ວຍການລົງທຶນໃນເຂດເສດຖະກິດ

ພິເສດ, ເຂດອຸດສາຫະກຳ ແລະ ໂຄງການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່ເຊັ່ນ ໂຄງການກໍ່ສ້າງເສັ້ນທາງດ່ວນວຽງຈັນ-ວັງວຽງ, ໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ (ສະຖານເອກອັກຄະລັດຖະທູດໄທປະຈຳນະຄອນຫຼວງວຽງຈັນ ສປປ ລາວ, 2020: https://globthailand.com/laos-181120).

ນອກຈາກດ້ານການຄ້າ ແລະ ການລົງທຶນແລ້ວ ລັດຖະບານຈີນຍັງໃຫ້ການຊ່ວຍເຫຼືອທາງດ້ານງົບປະມານໃນຮູບແບບຊ່ວຍເຫຼືອລ້າໃນອີກຫຼາຍດ້ານເຊັ່ນ: ການກໍ່ສ້າງສູນປະຊຸມລະດັບຊາດ ແລະ ການກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ 4, ການປັບປຸງລະບົບການຊຳລະເງິນຜ່ານທະນາຄານ, ສະໜອງເງິນກູ້ທີ່ບໍ່ມີອັດຕາດອກເບ້ຍໃນໂຄງການຊື້ເຄື່ອງບິນ ແລະ ການປັບປຸງສູນວັດທະນະທຳແຫ່ງຊາດ ເປັນຕົ້ນ. ນອກຈາກນີ້ ຍັງມີການລົງທຶນໃນການພັດທະນາພື້ນຖານໂຄງລ່າງຕ່າງໆເຊັ່ນ: ລະບົບລົດໄຟລາວ-ຈີນ, ລະບົບໂທລະຄົມມະນາຄົມ, ການກໍ່ສ້າງເຂື່ອນໄຟຟ້າ ເປັນຕົ້ນ.

ທັງສອງປະເທດ ຍັງມີການຈັດຕັ້ງເຂດເສດຖະກິດພິເສດຂ້າມຊາຍແດນ ເພື່ອສົ່ງເສີມການຄ້າເສລີ ໂດຍສະເພາະໂຄງການລະຫວ່າງ ສປປ ລາວ ກັບ ແຂວງຢູນນານ. ເຊິ່ງໂຄງການເລົ່ານີ້ມີບົດບາດສຳຄັນໃນການປັບປຽນຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ພ້ອມນີ້ ສປ ຈີນຍັງມີຄວາມພ້ອມໃນການພັດນາໃນອີກຫຼາຍໆດ້ານ ເພື່ອເພີ່ມຄວາມສາມາດໃນການຜະລິດ, ລະດັບເທັກໂນໂລຊີ ແລະ ທັກສະການບໍລິຫານຈັດການ ເຊິ່ງ ສປປ ລາວ ເອງກໍ່ຢູ່ໃນສະຖານະທີ່ຕ້ອງການພັດທະນາຢູ່ແລ້ວ ໂດຍສະເພາະດ້ານການຖ່າຍທອດເທັກໂນໂລຊີໃນໄລຍະສັ້ນ, ເນັ້ນເລື່ອງພະລັງງານ, ການກະເສດ, ອຸດສາຫະກຳ, ການສຶກສາ, ການແພດ ແລະ ການບໍລິການ. ສຳລັບໃນໄລຍະຍາວ ແມ່ນເນັ້ນໃນການພັດທະນາຊັບພະຍາກອນມະນຸດ.

ແນວໃດກໍ່ຕາມການຜະລິດຂອງ ສປປ ລາວ ຍັງຄົງຢູ່ໃນເກນຕ່ຳ ແລະ ຍັງຂາດຂີດຄວາມສາມາດໃນການແຂ່ງຂັນ, ມາດຕະການຂອງລັດຖະບານຈີນຄັ້ງນີ້ ຈະຊ່ວຍກະຕຸ້ນຂີດຄວາມສາມາດຂອງພາກກະສິກຳ ແລະ ອຸດສາຫະກຳຂອງ ສປປ ລາວ ຊ່ວຍໃຫ້ຜູ້ປະກອບການ ແລະ ຜູ້ຜະລິດເຂົ້າເຖິງຕະຫຼາດທີ່ມີຂະໜາດໃຫຍ່ດັ່ງ ສປ ຈີນ ແລະ ສົ່ງເສີມການພັດທະນາພາກກະສິກຳ ແລະ ການລົງທຶນໃນ ສປປ ລາວ ໃນຊ່ວງ 9 ເດືອນທຳອິດຂອງປີ 2020 ສົ່ງຜົນໃຫ້ການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ມີມູນຄ່າປະມານ 1,800 ລ້ານ ດອນລາສະຫະລັດ ເຊິ່ງລຸດລົງຈາກປີຜ່ານມາ ເນື່ອງຈາກຜົນກະທົບຈາກການລະບາດຂອງພະຍາດໂຄວິດ 19.

ຈາກບັນຫາດັ່ງກ່າວຈຶ່ງເຮັດໃຫ້ການສຶກສາຄັ້ງນີ້ມີຄວາມສົນໃຈກ່ຽວກັບການເພິ່ງພາ ແລະ ຄວາມໄດ້ປຽບທາງການຄ້າຕ່າງປະເທດຂອງ ສປປ ລາວ ພາຍໃຕ້ສະຖານະການ ການແຜ່ລະບາດຂອງພະຍາດໂຄວິດ 19, ເຊິ່ງຜົນຂອງການສຶກສາຄັ້ງນີ້ ອາດເປັນຂໍ້ມູນໃນການວາງແຜນ ແລະ ປັບປຸງນະໂຍບາຍການພົວພັນດ້ານເສດຖະກິດ-ການຄ້າກັບບັນດາປະເທດໃນພາກພື້ນ ລວມເຖິງການວາງແຜນເພື່ອພັດທະນາຂີດຄວາມສາມາດໃນການຜະລິດ ແລະ ການສົ່ງອອກສິນຄ້າຂອງ ສປປ ລາວ ໃຫ້ດີຂຶ້ນຕໍ່ໄປໃນອະນາຄົດ.

ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈ ກຸ່ມຜູ້ວິໄຈໄດ້ມີຈຸດປະສົງຂອງການຄົ້ນຄວ້າວິໄຈຄືດັ່ງນີ້:

(1) ວິເຄາະການເພິ່ງພາ ແລະ ຄວາມໄດ້ປຽບໂດຍປຽບທຽບທາງດ້ານການຄ້າຂອງ ສປປ ລາວ ກັບ ສປ ຈີນ

(2) ວິເຄາະປັດໄຈທີ່ມີຜົນຕໍ່ການຂະຫຍາຍຕົວທາງດ້ານການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ

(3) ພະຍາກອນການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີການ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນ ການສຶກສາແບບ ແບບປະລິມານ (Quantitative Research), ໂດຍນຳໃຊ້ຂໍ້ມູນທຸຕິຍະພູມ (Secondary data) ທີ່ໄດ້ມາຈາກການສັງລວມຈາກເອກະສານຕ່າງໆທີ່ກ່ຽວຂ້ອງເຊັ່ນ: ປຶດສະຫຼຸບ, ປຶດລາຍງານປະຈຳປີ, ປຶດຄົ້ນຄວ້າວິໄຈທີ່ກ່ຽວຂ້ອງ, ໜັງສືພິມ, ຂໍ້ມູນຕາມເວັບໄຊທາງອິນເຕີເນັດທີ່ມີຄວາມໜ້າເຊື່ອຖື ແລະ ອື່ນໆ ເຂົ້ານຳໃຊ້ໃນການສຶກສາ, ການອະທິບາຍຜົນຂອງການສຶກສາໃນຄັ້ງນີ້ ແມ່ນນຳໃຊ້ຮູບແບບການພັນລະນາ ດ້ວຍການນຳສະເໜີຄ່າຕົວເລກ, ນຳໃຊ້ຕາຕະລາງ ແລະ ຮູບພາບ ລວມໄປເຖິງບັນດາທິດສະດີທີ່ກ່ຽວຂ້ອງອື່ນໆ ເພື່ອປະກອບເຂົ້າໃນການອະທິບາຍເຫດ ແລະ ຜົນຂອງການສຶກສາ.

### 2.2 ການເກັບລວມລວມຂໍ້ມູນ

ຂໍ້ມູນທີ່ຄະນະຜູ້ວິໄຈເກັບລວບລວມຂໍ້ມູນທຸຕິຍະພູມ ມາວິເຄາະເປັນຫຼັກ, ເຊິ່ງໄດ້ລວບລວມມາຈາກກະຊວງອຸດສາຫະກຳ ແລະ ການຄ້າ ກົມສົ່ງເສີມການສົ່ງອອກ-ນຳເຂົ້າ, ກົມນະໂຍບາຍ ແລະ ພົວພັນຕ່າງປະເທດ.

### 2.3 ການວິເຄາະຂໍ້ມູນ

ແມ່ນນຳໃຊ້ການວິຕາມທິດສະດີການເພິ່ງພາທາງດ້ານການຄ້າ ແລະ ທິດສະດີຄວາມໄດ້ປຽບໂດຍປຽບທຽບ ໂດຍນຳເອົາຂໍ້ມູນທີ່ໄດ້ຮອບຮອມມາສັງລວມ ມາວິເຄາະຜ່ານດັດສະນີການເພິ່ງພາທາງການຄ້າ (Trade dependent: TD) ແລະ ດັດສະນີຄວາມໄດ້ປຽບໂດຍປຽບປຽບ (Revealed comparative advantage: RCA) ໂດຍການວິເຄາະຜ່ານໂປຣແກມ Excel 2010. ແລ້ວນຳສະເໜີຂໍ້ມູນໂດຍນຳໃຊ້ສະຖິຕິພັນລະນາ (Descriptive Statistics) ເພື່ອອະທິບາຍລັກສະນະຂອງຂໍ້ມູນຕ່າງໆເຊັ່ນ: ຄ່າສ່ວນຮ້ອຍ. ສຳລັບການວິເຄາະປັດໄຈທີ່ມີຜົນຕໍ່ການຂະຫຍາຍຕົວດ້ານການຄ້າຂອງ ສປປ ລາວ ກັບ ສປ ຈີນ ແມ່ນໄດ້ນຳໃຊ້ດ້ວຍວິທີການຄາດປະມານແບບວິທີກຳລັງສອງນ້ອຍສຸດ (Ordinary Least Squares: OLS) ດ້ວຍລະດັບຄວາມເຊື່ອໝັ້ນ 90%, 95% ແລະ 99% ໂດຍການວິເຄາະຜ່ານໂປຣແກມທາງສະຖິຕິ (SPSS Version 20) ໂດຍກຳນົດຄ່າລະດັບຄວາມສຳຄັນທາງດ້ານສະຖິຕິຄື $^{*}sig \le 0.1$ $^{**}sig \le 0.05$ $^{***}sig \le 0.01$. ສ່ວນພະຍາກອນການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ແມ່ນໄດ້ນຳໃຊ້ສະຖິຕິອະນຸມານເຂົ້າໃນການວິເຄາະໄລຍະແຕ່ປີ 2021-2025 ດ້ວຍແບບຈຳລອງອະນຸກົມເວລາ $t = Y_t = b_0 + b_1T$.

## 3. ຜົນໄດ້ຮັບ

ຜົນການສຶກສາພົບວ່າ ສປປ ລາວ ໄດ້ມີການພົວພັນທາງການຄ້າໂດຍສະເພາະການນຳເຂົ້າສິນຄ້າຈາກ ສປ ຈີນ ກວມເອົາອັດຕາສ່ວນໂດຍສະເລ່ຍ 24.85% ຂອງມູນຄ່າການນຳເຂົ້າສິນຄ້າທັງໝົດ ແລະ ມີອັດຕາສ່ວນການເພິ່ງພາທາງການຄ້າໂດຍສະເລ່ຍ 14.60%, ເຊິ່ງໃນນັ້ນໃນຊ່ວງໄລຍະເວລາການແຜ່ລະບາດຂອງໂລກພະຍາດໂຄວິດ-19 ມານີ້ ສປປ ລາວ ກໍ່ຍັງມີມູນຄ່າການນຳເຂົ້າສິນຄ້າຈາກ ສປ ຈີນ ເພີ່ມຂຶ້ນ ເຊິ່ງສະແດງອອກຄື: ໃນປີ 2018 ສປປ ລາວ ມີມູນຄ່າການນຳເຂົ້າສິນຄ້າ ຈາກ ສປ ຈີນ ຢູ່ທີ່ 1,283,616 ໂດລາສະຫະລັດ, ກວມເອົາສັດສ່ວນ 21.95% ຂອງມູນຄ່າການນຳເຂົ້າ; ໃນນັ້ນໄດ້ມູນຄ່າການນຳເຂົ້າໄດ້ເພີ່ມຂຶ້ນເປັນ 1,681,038 ໂດລາສະຫະລັດ, ກວມເອົາສັດສ່ວນ 29.00% ຂອງມູນຄ່າການນຳເຂົ້າໃນປີ 2019 ແລະ ເພີ່ມຂຶ້ນເປັນ 1,295,107 ໂດລາສະຫະລັດ, ກວມເອົາສັດສ່ວນ 25.78% ຂອງມູນຄ່າການນຳເຂົ້າໃນປີ 2020. ໃນດ້ານອັດຕາສ່ວນການເພິ່ງພາການນຳເຂົ້າ (Import dependent: MD) ໂດຍສະເລ່ຍໄດ້ຫຼຸດລົງ ຄື: ໃນປີ 2018 ມີອັດຕາການເພິ່ງພາການນຳເຂົ້າ 15.39% ເລີ່ມຫຼຸດລົງເຫຼືອພຽງ 14.51% ໃນປີ 2019 ແລະ ຫຼຸດລົງເຫຼືອພຽງ 13.98% ໃນປີ 2020; ພ້ອມດຽວກັນນັ້ນ ສປປ ລາວ ໄດ້ມີການພົວພັນທາງການຄ້າໂດຍສະເພາະການສົ່ງອອກສິນຄ້າໄປ ສປ ຈີນ ມີອັດຕາສ່ວນໂດຍສະເລ່ຍກວມເອົາ 15.56% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ ແລະ ມີອັດຕາສ່ວນການເພິ່ງພາທາງການຄ້າໂດຍສະເລ່ຍ 15.34%. ເຊິ່ງໃນນັ້ນໃນຊ່ວງໄລຍະເວລາການແຜ່ລະບາດຂອງໂລກພະຍາດໂຄວິດ-19 ມານີ້ ສປປ ລາວ ກໍ່ຍັງມີມູນຄ່າການສົ່ງອອກສິນຄ້າໄປ ສປ ຈີນ ໄດ້ເພີ່ມຂຶ້ນແລະຫຼຸດລົງໃນບາງປີ ເຊິ່ງສະແດງອອກຄື: ໃນປີ 2018 ສປປ ລາວ ມີມູນຄ່າການສົ່ງອອກສິນຄ້າໄປ ສປ ຈີນ ຢູ່ທີ່ 5,860,513 ໂດລາສະຫະລັດ , ກວມເອົາສັດສ່ວນ 3.93% ຂອງມູນຄ່າການສົ່ງອອກ; ໃນນັ້ນໄດ້ມູນຄ່າການສົ່ງອອກໄດ້ເພີ່ມຂຶ້ນເປັນ 9,171,196 ໂດລາສະຫະລັດ, ກວມເອົາສັດສ່ວນ 18.23% ຂອງມູນຄ່າການສົ່ງອອກໃນປີ 2019 ແລະ ໄດ້ຫຼຸດລົງເປັນ 9,064,681 ໂດລາສະຫະລັດ, ກວມເອົາສັດ ສ່ວນ 16.17% ຂອງມູນຄ່າການສົ່ງອອກໃນປີ 2020. ໃນດ້ານອັດຕາສ່ວນການເພິ່ງພາການສົ່ງອອກ (Export dependent: XD) ໂດຍສະເລ່ຍໄດ້ເພີ່ມຂຶ້ນ ຄື: ໃນປີ 2018 ມີອັດຕາການເພິ່ງພາການສົ່ງອອກ 15.39%; ໄດ້ຫຼຸດລົງເປັນ 14.53% ໃນປີ 2019 ແລະ ໄດ້ເພີ່ມຂຶ້ນເປັນ 17.63% ໃນປີ 2020 ເຊິ່ງໝາຍຄວາມວ່າ ມູນຄ່າການສົ່ງອອກສິນຄ້າຂອງ ສປປ ລາວ ໄປ ສປ ຈີນ ໄດ້ເພີ່ມຂຶ້ນ ຫຼື ຫຼຸດລົງໃນບາງປີເຊິ່ງສົ່ງຜົນຕໍ່ອັດຕາສ່ວນການເພິ່ງພາທາງການຄ້າເພີ່ມຂຶ້ນ ແລະ ຫຼຸດລົງເຊັ່ນກັນເຊິ່ງໝາຍຄວາມວ່າ ເຖິງແມ່ນວ່າ ສປປ ລາວ ຈະມີມູນຄ່າການນຳເຂົ້າ ແລະ ສົ່ງອອກສິນຄ້າ ເພີ່ມຂຶ້ນໃນແຕ່ລະປີແຕ່ອັດຕາສ່ວນການເພິ່ງພາທາງການຄ້າກັບຫຼຸດລົງ ອັນເນື່ອງມາຈາກຜົນກະທົບຂອງການແຜ່ລະບາດໂລກພະຍາດໂຄວິດ-19 ແລະ ປັດໄຈພາຍນອກອື່ນໆ ທີ່ມີຕໍ່ການປ່ຽນແປງທາງດ້ານເສດຖະກິດ

(GDP) ຂອງປະເທດນັ້ນເອງ.

ໃນຊ່ວງການລະບາດຂອງໂລກພະຍາດໂຄວິດ 19 (ໄລຍະປີ 2018 - 2020) ຜ່ານມາ ສປປ ລາວ ໄດ້ມີການສົ່ງອອກສິນຄ້າໄປ ສປ ຈີນ ຫຼາຍຊະນິດດ້ວຍກັນ ເຊິ່ງໃນນັ້ນສິນຄ້າທີ່ມີຄວາມໂດດເດັ່ນໃນການສົ່ງອອກປະກອບມີ: ແຮ່ທາດ, ກາສທຳມະຊາດ, ຢາງພາລາ, ໄມ້ ແລະ ຜະລິດຕະພັນໄມ້, ອຸປະກອນໄຟຟ້າ, ສັດລ້ຽງ, ພືດຜັກຕ່າງໆ, ໝາກໄມ້ ແລະ ຖົ່ວ, ກາເຟ ແລະ ຊາ, ທັນຍາພືດ ເປັນຕົ້ນ. ການວິເຄາະຄວາມໄດ້ປຽບໂດຍປຽບທຽບດ້ານການສົ່ງອອກສິນຄ້າຂອງ ສປປ ລາວ ໄປ ສປ ຈີນ ສາມາດວິເຄາະຜ່ານດັດສະນະຄວາມໄດ້ປຽບໂດຍປຽບທຽບໄດ້ດັ່ງນີ້:

ໃນປີ 2018-2019 ປະເພດສິນຄ້າທີ່ມີຄວາມໄດ້ປຽບ ໂດຍປຽບທຽບໃນການສົ່ງອອກຂອງ ສປປ ລາວ ໄປ ສປ ຈີນ ທີ່ເດັ່ນໆຈະປະກອບດ້ວຍ: ສິນຄ້າປະເພດແຮ່ທາດ ເຊິ່ງມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 278.62 ແລະ 154.52 ຕາມລຳດັບ; ຮອງລົງມາແມ່ນການສົ່ງອອກສັດລ້ຽງ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 72.44 ແລະ 192.95 ຕາມລຳດັບ; ຕໍ່ມາແມ່ນການສົ່ງອອກທັນຍາພືດ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 29.06 ແລະ 20.03 ຕາມລຳດັບ; ການສົ່ງອອກໝາກໄມ້ ແລະ ຖົ່ວ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 13.64 ແລະ 19.55 ຕາມລຳດັບ; ການສົ່ງອອກກ໊າສທຳມະຊາດ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 12.97 ແລະ 12.29 ຕາມລຳດັບ; ການສົ່ງອອກກາເຟ ແລະ ຊາ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 13.03 ແລະ 8.19 ຕາມລຳດັບ. ສ່ວນສຳລັບການສົ່ງອອກພືດຜັກຕ່າງໆ, ຢາງພາລາ, ໄມ້ ແລະ ຜະລິດຕະພັນໄມ້ ແມ່ນມີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກໃນລະດັບໜ້ອຍ. ສຳລັບໃນປີ 2020 ປະເພດສິນຄ້າທີ່ມີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກຂອງ ສປປ ລາວ ໄປ ສປ ຈີນ ທີ່ເດັ່ນໆຈະປະກອບດ້ວຍ: ສິນຄ້າປະເພດແຮ່ທາດ ເຊິ່ງມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 109.50; ຮອງລົງມາແມ່ນການສົ່ງອອກທັນຍາພືດ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 57.60; ຕໍ່ມາແມ່ນການສົ່ງອອກກ໊າສທຳມະຊາດ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 25.97; ການສົ່ງອອກກາເຟ ແລະ ຊາ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 12.54; ການສົ່ງອອກພືດຜັກຕ່າງໆ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 9.56; ການສົ່ງອອກຢາງພາລາ ມີດັດສະນີຄວາມໄດ້ປຽບ (RCA) ເທົ່າກັບ 7.31 ຕາມລຳດັບ; ສ່ວນສຳລັບການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້, ການສົ່ງອອກໝາກໄມ້ ແລະ ໝາກຖົ່ວ ແລະ ການສົ່ງອອກສັດລ້ຽງ ແມ່ນມີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກໃນລະດັບໜ້ອຍ.

ໂດຍຜ່ານວິເຄາະປັດໄຈທີ່ມີຜົນຕໍ່ການເພິ່ງພາທາງການຄ້າທັງໝົດ 5 ປັດໄຈ ເຊິ່ງໃນນັ້ນແບບຈຳລອງບໍ່ປະກົດມີບັນຫາ Autocorrelation ແລະ ບັນດາປັດໄຈຕ່າງໆ ສາມາດພະຍາກອນ ຫຼື ອະທິບາຍກ່ຽວລັກສະນະການເພິ່ງພາທາງການຄ້າຂອງ ສປປ ລາວ ກັບ ສປ ຈີນ ໄດ້ສູງເຖິງ 99.7% ດ້ວຍລະດັບຄວາມເຊື່ອໝັ້ນ 99% ດັ່ງລາຍລະອຽດຕໍ່ໄປນີ້:

$$TD = 45.787 - 1335.00\ GDP_{Laos} - 1207.00\ INV_{China} + 0.001\ EXR_{kip/\$} + 1.229\ INF_{Laos} - 9555.00\ FDI$$

ປັດໄຈດ້ານລວມຍອດຜະລິດຕະພັນພາຍໃນຂອງ ສປປ ລາວ: ຖ້າລວມຍອດຜະລິດຕະພັນພາຍໃນຂອງ ສປປ ລາວ (GDP) ເພີ່ມຂຶ້ນ 1 ດອນລາສະຫະລັດ ໂດຍກຳນົດໃຫ້ປັດໃຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ຫຼຸດລົງ 1335 ດອນລາສະຫະລັດ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ປັດໄຈດ້ານມູນຄ່າການລົງທຶນຂອງ ສປ ຈີນ ໃນ ສປປ ລາວ: ຖ້າມູນຄ່າການລົງທຶນຂອງ ສປ ຈີນ ໃນ ສປປ ລາວ ເພີ່ມຂຶ້ນ 1 ດອນລາສະຫະລັດ ໂດຍກຳນົດໃຫ້ປັດໃຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ລຸດລົງ 1207 ດອນລາສະຫະລັດ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ປັດໄຈດ້ານອັດຕາແລກປ່ຽນເງິນຕາຕ່າງປະເທດ: ຖ້າອັດຕາແລກປ່ຽນເງິນຕາຕ່າງປະເທດ ມີການພົວພັນໄປໃນທິດທາງດຽວກັນກັບການເພິ່ງພາທາງການຄ້ານັ້ນຄື: ອັດຕາແລກປ່ຽນເງິນຕາຕ່າງປະເທດ ເພີ່ມຂຶ້ນ 1 ກີບ/ດອນລາສະຫະລັດ ໂດຍກຳນົດໃຫ້ປັດໃຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ເພີ່ມຂຶ້ນ 0.001 ດອນລາສະຫະລັດ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ປັດໄຈດ້ານອັດຕາເງິນເຟີ້: ຖ້າອັດຕາເງິນເຟີ້ໃນ ສປປ

ລາວ ເພີ່ມຂຶ້ນ 1% ໂດຍກຳນົດໃຫ້ປັດໃຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ເພີ່ມຂຶ້ນ 1.229% ດ້ວຍລະດັບຄວາມເຊື່ອໝັ້ນ 95%; ປັດໃຈດ້ານມູນຄ່າການລົງທຶນຕ່າງປະເທດໃນ ສປປ ລາວ: ຖ້າມູນຄ່າການລົງທຶນຕ່າງປະເທດໃນ ສປປ ລາວ ເພີ່ມຂຶ້ນ 1 ດອນລາສະຫະລັດ ໂດຍກຳນົດໃຫ້ປັດໃຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ລຸດລົງ 9555 ດອນລາສະຫະລັດ ດ້ວຍລະດັບຄວາມເຊື່ອໝັ້ນ 99% .

ສຳລັບການພະຍາກອນການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ແມ່ນຈະໄດ້ມີການພະຍາກອນໃນ 3 ພາກສ່ວນຄື: ການພະຍາກອນການການເພິ່ງພາທາງການຄ້າລວມ, ການເພິ່ງພາການສົ່ງອອກສິນຄ້າ ແລະ ການເພິ່ງພາການນຳເຂົ້າສິນຄ້າ ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

ຜົນການວິເຄາະການພະຍາກອນ ຫຼື ທ່າອ່ຽງການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ແຕ່ປີ 2021-2025 ພາຍໃຕ້ກອບແນວຄວາມຄິດທີ່ວ່າ: "ການເພິ່ງພາທາງການຄ້າທາງການຄ້າ" ຖ້າເບິ່ງໃນພາບລວມດ້ານມະຫາພາກ ແນວໂນ້ມການເພິ່ງພາທາງການຄ້າໃນອະນາຄົດແມ່ນຈະມີພາວະຂະຫຍາຍຕົວແບບຕໍ່ເນື່ອງ ແລະ ເພີ່ມຂຶ້ນໃນທຸກໆປີ ໂດຍຄາດວ່າຈະເພີ່ມຂຶ້ນຈາກ 31.61% ໃນປີ 2021 ມາເປັນ 33.86% ໃນປີ 2025, ອັນເປັນຜົນມາຈາກມູນຄ່າການນຳເຂົ້າສິນຄ້າຂອງ ສປປ ລາວ ຈາກ ສປ ຈີນ ແມ່ນມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະປີຕາມລຳດັບຄື: ຈາກ 169,000 ໂດລາສະຫະລັດ ໃນປີ 2021 ແລະ ຄາດວ່າຈະມີມູນຄ່າເຖິງ 225,000 ໂດລາສະຫະລັດ ໃນປີ 2025 ດ້ວຍລະດັບຄວາມສຳຄັນທາງສະຖິ (Sig = 0.05) ແລະ ສາມາດພະຍາກອນໄດ້ຖືກຕ້ອງ 81.3%. ສາເຫດທີ່ເຮັດໃຫ້ມູນຄ່າການນຳເຂົ້າເພີ່ມຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະປີກໍ່ຍ້ອນວ່າ ນັບແຕ່ທ້າຍປີ 2021 ເປັນຕົ້ນມາ ສປປ ລາວ ໄດ້ເປີດນຳໃຊ້ເສັ້ນທາງລົດໄຟຟ້າລາວ-ຈີນ ຢ່າງເປັນທາງການ ສົ່ງຜົນຜົນໃຫ້ການນຳເຂົ້າ ແລະ ຂົນສົ່ງສິນຄ້າມີຄວາມສະດວກວ່ອງໄວຂຶ້ນ. ສ່ວນໃຫຍ່ຈະແມ່ນສິນຄ້າ ປະເພດອຸດສາຫະກຳກໍ່ສ້າງ ເຊັ່ນ: ເຄື່ອງຈັກ, ອຸປະກອນເຄື່ອງໃຊ້ໄຟຟ້າ, ພາຫະນະ, ອຸປະກອນ ແລະ ຊິ້ນສ່ວນປະກອບ, ຜະລິດຕະພັນພຣາສຕິກ ແລະ ອາຫານເຄິ່ງສຳເລັດຮູບເປັນຕົ້ນ. ເຊິ່ງສິນຄ້າດັ່ງກ່າວແມ່ນເພື່ອຕອບສະໜອງຕໍ່ການລົງທຶນພັດທະນາພື້ນຖານໂຄງລ່າງພາຍໃນປະເທດ; ອີກປະການໜຶ່ງກໍ່ເນື່ອງຈາກສິນຄ້າທີ່ ສປ ຈີນ ສົ່ງອອກກໍ່ມີຄຸນນະພາບ, ລາຄາຖືກເຊິ່ງເໝາະສົມຕໍ່ຜູ້ບໍລິໂພກ ຫຼື ຜູ້ຊົມໃຊ້ໃນ ສປປ ລາວ. ແຕ່ສຳລັບແນວໂນ້ມການເພິ່ງພາການນຳເຂົ້າສິນຄ້າ ຈາກ ສປ ຈີນ ແມ່ນມີທ່າອ່ຽງເພີ່ມຂຶ້ນ ໃນລະດັບຄົງທີ່ແຕ່ລະປີຄື: ຈາກການເພິ່ງພາການນຳເຂົ້າໃນອັດຕາສ່ວນ 16.22% ທັງນີ້ກໍ່ເພາະວ່າການເພິ່ງພາທາງການນຳເຂົ້າສິນຄ້າ ແມ່ນຍັງຂຶ້ນກັບປັດໃຈຫຼັກຄື ລວມຍອດຜະລິດຕະພັນພາຍໃນຂອງປະເທດ ເຊິ່ງຈະສັງເກດເຫັນໄດ້ວ່າໃນຊ່ວງການລະບາດຂອງໂລກພະຍາດໂຄວິດ 19 ທີ່ຜ່ານມານີ້ (2018-2021) ອັດຕາການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ ໄດ້ມີການຖົດຖອຍລົງຄື: ເພີ່ມຂຶ້ນອັດຕາຕາທີ່ລຸດລົງໃນທຸກໆປີ ໂດຍຈາກ 6.27% ໃນປີ 2018 ເຫຼືອພຽງ 1.29% ໃນປີ 2021. ອີກປະການໜຶ່ງ ສປປ ລາວ ກໍ່ໄດ້ເລີ່ມປະຕິບັດນະໂຍບາຍສົ່ງເສີມການລົງທຶນ ແລະ ການຜະລິດພາຍໃນຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເຊິ່ງຄາດວ່າຖ້າສາມາດປະຕິບັດໄດ້ຕາມແຜນການ ແລະ ເປົ້າໝາຍຂອງທາງລັດຖະບານວາງອອກໄດ້ ຈະຊ່ວຍໃຫ້ ສປປ ລາວ ສາມາດຜະລິດສິນຄ້າມາສະໜອງພາຍໃນປະເພດໄດ້ຫຼາຍຂຶ້ນ ເຊິ່ງຈະເປັນການຊ່ວຍລຸດຜ່ອນຕົ້ນທຶນການນຳເຂົ້າສິນຄ້າຈາກຕ່າງປະເທດໂດຍສະເພາະຈາກ ສປ ຈີນ ໄດ້ຫຼາຍຂຶ້ນ. ປະສານສົມທົບກັບ ສປປ ລາວ ແມ່ນຍັງໄດ້ສືບຕໍ່ສົ່ງອອກສິນຄ້າໄປ ສປ ຈີນ ເພີ່ມຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະປີຕາມລຳດັບຄື: ຈາກ 152,000 ໂດລາສະຫະລັດ ໃນປີ 2021 ແລະ ຄາດວ່າຈະມີມູນຄ່າເຖິງ 207,000 ໂດລາສະຫະລັດ ໃນປີ 2025 ດ້ວຍລະດັບຄວາມສຳຄັນທາງສະຖິ (Sig = 0.05) ແລະ ສາມາດພະຍາກອນໄດ້ຖືກຕ້ອງ 87.1%. ສາເຫດທີ່ເຮັດໃຫ້ມູນຄ່າການສົ່ງອອກເພີ່ມຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະປີກໍ່ຍ້ອນວ່າ ນັບແຕ່ປີ 2018-2020 ເປັນຕົ້ນມາ ສປ ຈີນ ໄດ້ມີການລຸດອັດຕາພາສີສິນຄ້າຈາກ ສປປ ລາວ ບາງປະເພດໃຫ້ເຫຼືອ 0% ອັນໄດ້ສົ່ງຜົນເຮັດໃຫ້ການສົ່ງອອກສິນຄ້າໄປ ສປ ຈີນ ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງໃນທຸກໆປີ ເຖິງແມ່ນວ່າຈະມີການລະບາດຂອງໂລກພະຍາດໂຄວິດ 19 ກໍ່ຕາມ ເຊິ່ງມີມູນຄ່າລວມປະມານ 18,361,088 ໂດລາສະຫະລັດ ໃນນັ້ນສິນຄ້າທີ່ສົ່ງອອກຫຼັກຄື: ແຮ່ທາດ, ສັດລ້ຽງ, ທັນຍາພືດ, ກ໊າສທຳມະຊາດ ມີມູນຄ່າສູງເຖິງ 4,701,950 ໂດລາສະຫະລັດ, ກວມເອົາ 25.61% ຂອງມູນຄ່າການສົ່ງອອກ

ສິນຄ້າທັງໝົດ; ແຮ່ທາດມີມູນຄ່າ 1,910,471 ໂດລາສະຫະລັດ, ກວມເອົາ 10.40% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ; ເຄື່ອງຈັກ ແລະ ອຸປະກອນໄຟຟ້າ ມູນຄ່າ 1,370,702 ໂດລາສະຫະລັດ, ກວມເອົາ 7.47% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ; ພືດຜັກ ແລະ ໝາກໄມ້ ມີມູນຄ່າ 1,006,934 ໂດລາສະຫະລັດ, ກວມເອົາ 5.48% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ ແລະ ຢາງພາລາ ມີມູນຄ່າ 772,424 ໂດລາສະຫະລັດ ກວມເອົາ 4.21% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ; ແຕ່ເຖິງແນວໃດກໍ່ຕາມ ສຳລັບແນວໂນ້ມການເພິ່ງພາການສົ່ງອອກສິນຄ້າ ກັບ ສປ ຈີນ ແມ່ນມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີຄື: ຈາກການເພິ່ງພາການສົ່ງອອກໃນອັດຕາ 17.40% ໃນປີ 2021 ຄາດວ່າ ຈະເພີ່ມຂຶ້ນເປັນ 19.99% ໃນປີ 2025 ທັງນີ້ກໍ່ເພາະວ່າການສົ່ງອອກສິນຄ້າບາງປະເພດຂອງ ສປປ ລາວ ໄປ ສປ ຈີນ ມີທ່າອ່ຽງຫຼຸດລົງຫຼາຍເປັນຕົ້ນແມ່ນ ການສົ່ງອອກສັດລ້ຽງ, ການສົ່ງອອກແຮ່ທາດ, ໝາກໄມ້ ແລະ ປະເພດຖົ່ວ ເປັນຕົ້ນ. ໄປຄຽງຄູ່ກັບການທີ່ລັດຖະບານ ສປປ ລາວ ໄດ້ມີການເພີ່ມທະວີໃນການຈັດຕັ້ງປະຕິບັດນະໂຍບາຍໃຫ້ພາກເອກະຊົນ ໂດຍສະເພາະວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງກາງ ພາຍໃນຫັນມາຜະລິດສິນຄ້າໃຫ້ຫຼາຍຂຶ້ນ ແລະ ສາມາດຕອບສະໜອງຄວາມຕ້ອງການໃຫ້ພຽງພໍ ເພື່ອຮັກສາຄວາມສົມດຸນຂອງຕະຫຼາດພາຍໃນ; ສ່ວນທາງດ້ານອຸດສາຫະກຳຜະລິດ, ປຸງແຕ່ງ ລັດຖະບານກໍ່ຕ້ອງໄດ້ເນັ້ນໃສ່ໃຫ້ມີຫຼາກຫຼາຍຜະລິດຕະພັນ, ແຍກບາງຜະລິດຕະພັນທີ່ສາມາດແປຮູບໄດ້ຫຼາຍຢ່າງ ທັງນີ້ກໍ່ເພື່ອສ້າງໃຫ້ສິນຄ້າສົ່ງອອກມີມູນຄ່າເພີ່ມນັ້ນເອງ.

## 4. ວິພາກຜົນ

ສຳລັບຜົນການວິເຄາະຂໍ້ມູນການວິເຄາະການເພິ່ງພາທາງການຄ້າລາວ-ຈີນ ເປັນການວິເຄາະຄວາມສຳພັນກັນຂອງການສົ່ງອອກ ແລະ ການນຳເຂົ້າສິນຄ້າລະຫວ່າງລາວ-ຈີນ-ປະເທດອື່ນໆ ທີ່ສົ່ງຜົນຕໍ່ອັດຕາການປ່ຽນແປງທາງເສດຖະກິດຂອງ ສປປ ລາວ ໂດຍມີການປຽບທຽບອັດຕາສ່ວນການປ່ຽນແປງໃນແຕ່ລະປີ ເພື່ອສະແດງໃຫ້ເຫັນອັດຕາສ່ວນການເພິ່ງພາທາງການຄ້າກັບຕ່າງປະເທດ ຂອງ ສປປ ລາວ ໂດຍສະເພາະແມ່ນ ສປ ຈີນ. ເຊິ່ງໃນອະນາຄົດ ສປປ ລາວ ແມ່ນມີທ່າອ່ຽງໃນການເພິ່ງພາທາງການຄ້າ ກັບ ສປ ຈີນ ໂດຍສະເພາະທ່າອ່ຽງໃນການນຳເຂົ້າ ແລະ ສົ່ງອອກສິນຄ້າເພີ່ມຂຶ້ນຢ່າງຕໍ່ເນື່ອງໃນທຸກໆປີ ແຕ່ມີການເພີ່ມຂຶ້ນໃນອັດຕາທີ່ລຸດລົງ ເຊິ່ງສອດຄ່ອງກັບບົດວິໄຈຂອງ ອອນສຸດາ ວິໄລພົນ (2018) ສຶກສາການວິເຄາະປຽບທຽບການພົວພັນທາງດ້ານການຄ້າຂອງ ສປປ ລາວກັບບັນດາປະເທດອາຊຽນບວກສາມ ທີ່ວ່າການພົວພັນທາງການຄ້າໂດຍສະເພາະການພົວພັນການຄ້າລາວ-ຈີນ ແມ່ນມີທ່າອ່ຽງເພີ່ມຂຶ້ນ. ພ້ອມນັ້ນ ສປປ ລາວ ແມ່ນມີຄວາມໄດ້ປຽບໃນການສົ່ງອອກສິນຄ້າກະສິກຳເປັນສ່ວນໃຫຍ່ເຊັ່ນ: ສັດລ້ຽງ, ທັນຍາພືດ, ກ໊າສທຳມະຊາດ, ຜັກ ແລະ ໝາກໄມ້ ເປັນສ່ວນໃຫຍ່ ເຊິ່ງສອດຄ່ອງກັບບົດວິໄຈຂອງສຸວະພົມ ລ່ຽມມົນຟຸນ ແລະ ຣົດຣິນ ໂອສະຖາບັນກຸນ (2014) ສຶກສາການວິເຄາະຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກສິນຄ້າກະເສດ ຂອງປະເທດສະມາຊິກອາຊຽນ ທີ່ວ່າສິນຄ້າທີ່ມີຄວາມໄດ້ປຽບຂອງບັນດາປະເທດອາຊຽນ ໂດຍສະເພາະ ສປປ ລາວ ມີຄວາມໄດ້ປຽບໂດຍສ່ວນໃຫຍ່ແມ່ນສິນຄ້າກະສິກຳ ແລະ ສັດລ້ຽງ; ແລະ ມີຄວາມເສຍປຽບໂດຍປຽບທຽບໃນການສົ່ງອອກສິນຄ້າປະເພດເຄື່ອງຈັກ ແລະ ເຄື່ອງໃຊ້ໄຟຟ້າ ເຊິ່ງສອດຄ່ອງກັບບົດວິໄຈຂອງ ເສີດພອນແກ້ວ (2017) ສຶກສາການວິເຄາະຄວາມໄດ້ປຽບໂດຍປຽບທຽບຂອງສິນຄ້າສົ່ງອອກ ສປປ ລາວ ໄປ ຣາຊະອານາຈັກໄທ, ສປ ຈີນ ແລະ ສສ ຫວຽດນາມ ແລະ ວົງພະຈັນ ຂັນທະວົງ (2018) ສຶກສາການວິເຄາະປຽບທຽບການວິເຄາະຄວາມໄດ້ປຽບໂດຍປຽບຂອງການສົ່ງສິນຄ້າອອກ ຂອງສາມປະເທດອາຊຽນ ກໍລະນີສຶກສາ ສປປ ລາວ-ລາຊະອານາຈັກໄທ-ສສ ຫວຽດນາມ ໄປ ສປ ຈີນ ເຊິ່ງພົບວ່າ ສປປ ລາວ ມີຄວາມເສຍປຽບເມື່ອປຽບທຽບໃນການສົ່ງເຄື່ອງສິນຄ້າປະເພດອຸດສາຫະກຳເຊັ່ນ: ປະເພດເຄື່ອງຈັກ. ສຳລັບຜົນການວິເຄາະປັດໄຈທີ່ມີຜົນຕໍ່ການເພິ່ງພາທາງການຄ້າພົບວ່າ ປັດໄຈດ້ານລວມຍອດຜະລິດຕະພັນພາຍໃນຂອງ ສປປ ລາວ, ປັດໄຈດ້ານມູນຄ່າການລົງທຶນຂອງ ສປ ຈີນ ໃນ ສປປ ລາວ ແລະ ປັດໄຈດ້ານມູນຄ່າການລົງທຶນຕ່າງປະເທດໃນ ສປປ ລາວ ແມ່ນມີຜົນຕໍ່ການເພິ່ງພາທາງການຄ້າລາວ-ຈີນ ໃນທິດທາງກົງກັນຂ້າມກັນນັ້ນຄືເມື່ອລວມຍອດຜະລິດຕະພັນພາຍ, ມູນຄ່າການລົງທຶນຂອງ ສປ ຈີນ ແລະ ມູນຄ່າການລົງທຶນຕ່າງປະເທດໃນ ສປປ ລາວ ເພີ່ມຂຶ້ນເຊິ່ງໝາຍຄວາມວ່າ ສປປ ລາວ ມີຄວາມເຂັ້ມແຂງທາງເສດຖະກິດທີ່ດີຂຶ້ນ ກໍ່ຈະສົ່ງຜົນເຮັດໃຫ້ມີການເພິ່ງພາທາງການຄ້າກັບຕ່າງປະເທດລຸດລົງ. ສ່ວນປັດໄຈດ້ານອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ປັດໄຈ

ດ້ານອັດຕາເງິນເຟີ້ ມີຜົນເຮັດໃຫ້ມີການເພິ່ງພາທາງການຄ້າ ລະຫວ່າງ ສປປ ລາວ ກັບ ສປ ຈີນ ໃນທິດທາງດຽວກັນ ນັ້ນຄື ເມື່ອລວມຍອດຜະລິດຕະພັນພາຍ, ມູນຄ່າການລົງທຶນຂອງ ສປ ຈີນ ແລະ ມູນຄ່າການລົງທຶນຕ່າງປະເທດ ໃນ ສປປ ລາວ ເກີດພາວະເງິນເຟີ້ສູງ ສົ່ງຜົນໃຫ້ອັດຕາ ແລກປ່ຽນເງິນຕາຕ່າງປະເທດສູງຂຶ້ນ ຫຼື ຄ່າເງິນສະກຸນພາຍ ໃນປະເທດອ່ອນຄ່າ ອຳນາດຊື້ຂອງຄົນໃນປະເທດລຸດລົງ ເສດຖະກິດມີການຖົດຖອຍ ກໍ່ຈະສົ່ງຜົນເຮັດໃຫ້ມີ ຄວາມຈຳເປັນການເພິ່ງພາທາງການຄ້າກັບຕ່າງປະເທດເພີ່ມ ຂຶ້ນ ແລະ ເປັນໄປໄດ້ວ່າເປັນໄປຕາມສົມມຸດຖານທີ່ກຳນົດ ໄວ້.

## 5. ສະຫຼຸບ

ຜົນການສຶກສາພົບວ່າ ສປປ ລາວ ມີການເພິ່ງພາທາງ ການຄ້າກັບ ສປ ຈີນ, ໃນນັ້ນ ມີການເພິ່ງພາດ້ານການສົ່ງ ອອກ ແລະ ການເພິ່ງພາດ້ານການຄ້າ. ມີຄວາມໄດ້ປຽບ ໂດຍປຽບທຽບໃນການສົ່ງອອກສິນຄ້າ 9 ປະເພດສິນຄ້າ ແລະ ມີຄວາມເສຍປຽບໂດຍປຽບທຽບໃນການສົ່ງອອກ ສິນຄ້າ 1 ປະເພດສິນຄ້າ, ມີ 3 ປັດໄຈທີ່ມີຜົນຕໍ່ການເພິ່ງພາ ທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ໃນທິດທາງ ກົງກັນຂ້າມກັນ ແລະ 2 ປັດໄຈທີ່ມີຜົນຕໍ່ການເພິ່ງທາງການ ຄ້າໃນທິດທາງດຽວກັນ. ພ້ອມດຽວກັນນີ້ ສປປ ລາວ ມີ ແນວໂນ້ມການເພິ່ງພາທາງການຄ້າໃນອະນາຄົດ ແຕ່ປີ 2021-2025 ໃນພາວະຂະຫຍາຍຕົວແບບຕໍ່ເນື່ອງ ແລະ ເພີ່ມຂຶ້ນໃນທຸກໆປີ, ໃນນັ້ນ ແນວໂນ້ມການສົ່ງອອກສິນຄ້າ ໄປ ສປ ຈີນ ກໍ່ມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີເຊັ່ນກັນ, ໃນ ຂະນະທີ່ແນວໂນ້ມການເພິ່ງພາການນຳເຂົ້າສິນຄ້າ ຈາກ ສປ ຈີນ ແມ່ນມີທ່າອ່ຽງເພີ່ມຂຶ້ນໃນລະດັບຄົງທີ່ແຕ່ລະປີຄື: 16.22% ຕໍ່ປີ. ເຊິ່ງໃນຊ່ວງການລະບາດຂອງໂລກພະຍາດ ໂຄວິດ 19 ທີ່ຜ່ານມານີ້ ອັດຕາການຂະຫຍາຍຕົວທາງ ເສດຖະກິດຂອງ ສປປ ລາວ ໄດ້ມີການຖົດຖອຍລົງ; ແຕ່ ລັດຖະບານ ສປປ ລາວ ກໍ່ໄດ້ມີການກະຕຸ້ນການປະຕິບັດ ນະໂຍບາຍສົ່ງເສີມການລົງທຶນ ແລະ ການຜະລິດພາຍໃນ ຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນປະເທດຫັນມາທຳການຜະລິດສິນຄ້າໃຫ້ຫຼາຍຂຶ້ນ ແລະ ສາມາດຕອບສະໜອງຄວາມຕ້ອງການໃຫ້ພຽງພໍ ແລະ ສາມາດຮັກສາຄວາມສົມດຸນຂອງຕະຫຼາດພາຍໃນ; ເຊິ່ງຄາດວ່າ ຖ້າສາມາດປະຕິບັດໄດ້ຕາມແຜນການ ແລະ ເປົ້າໝາຍຂອງທາງລັດຖະບານວາງອອກໄດ້ ຈະຊ່ວຍໃຫ້ ສປປ ລາວ ສາມາດສົ່ງອອກສິນຄ້າໄປ ສປ ຈີນ ເພີ່ມຂຶ້ນໃນ ອະນາຄົດ ທັງເປັນການສ້າງຄວາມສຳພັນ ແລະ ການຮ່ວມ ມືທາງດ້ານການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ ອີກ ດ້ວຍ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍ ປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການ ດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບ ພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນ ໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດ ໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ ດຽວ.

## 7. ເອກະສານອ້າງອີງ


ສຸວະພິມ ລ່ຽມມົນຟຸນ ແລະ ຣົດຣິນ ໂອສະຖາມັນກຸນ. (2014). ສຶກສາການວິເຄາະຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກສິນຄ້າກະເສດ ຂອງປະເທດສະມາຊິກອາຊຽນ. ພາກວິຊາເສດຖະສາດ, ຄະນະເສດຖະສາດ. ປະເທດໄທ: ບົດນິພົນປະລິນຍາໂທ, ມະຫາວິທະຍາໄລຊຽງໃໝ່.

ເສີດ ພອນແກ້ວ. (2017). ສຶກສາການວິເຄາະຄວາມໄດ້ປຽບໂດຍປຽບທຽບຂອງສິນຄ້າສົ່ງອອກ ສປປ ລາວ ໄປ ຣາຊະອານາຈັກໄທ, ສປ ຈີນ ແລະ ສສ ຫວຽດນາມ. ພາກວິຊາເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ. ຫຼວງພະບາງ: ບົດໂຄງການຈົບຊັ້ນປະລິນຍາຕີ, ສາຂາທຸລະກິດລະຫວ່າງປະເທດ, ມະຫາວິທະຍາໄລສຸພານຸວົງ.

ອຳໄພ ຈິດລະຄຳ. (2017). ສຶກສາການວິເຄາະການປຽບທຽບການພົວພັນທາງການຄ້າຂອງແຂວງອຸດົມໄຊກັບ ສປ ຈີນ ແລະ ສສ ຫວຽດນາມ . ພາກວິຊາເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ. ຫຼວງພະບາງ: ບົດໂຄງການຈົບຊັ້ນປະລິນຍາຕີ, ສາຂາທຸລະກິດລະຫວ່າງປະເທດ, ມະຫາວິທະຍາໄລສຸພານຸວົງ.

ສຸພາລັກ ຊາວະລິດ. (2018). ສຶກສາການວິເຄາະຄວາມໄດ້ປຽບໂດຍປຽບທຽບຂອງການສົ່ງອອກສິນຄ້າໃນແຂວງພາກເໜືອຂອງລາວ. ພາກວິຊາເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ. ຫຼວງພະ

ບາງ: ບົດໂຄງການຈົບຊັ້ນປະລິນຍາຕີ, ສາຂາທຸລະກິດລະຫວ່າງປະເທດ, ມະຫາວິທະຍາໄລສຸພານຸວົງ.

ອອນສຸດາ ວິໄລພົນ. (2018). ສຶກສາການວິເຄາະປຽບທຽບການພົວພັນທາງດ້ານການຄ້າຂອງ ສປປ ລາວກັບບັນດາ ປະເທດອາຊຽນບວກສາມ. ພາກວິຊາເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ. ຫຼວງພະບາງ: ບົດໂຄງການຈົບຊັ້ນປະລິນຍາຕີ, ສາຂາທຸລະກິດລະຫວ່າງປະເທດ, ມະຫາວິທະຍາໄລສຸພານຸວົງ.

ວົງພະຈັນ ຂັນທະວົງ. (2018). ສຶກສາການວິເຄາະປຽບທຽບການວິເຄາະຄວາມໄດ້ປຽບໂດຍປຽບຂອງການສົ່ງສິນຄ້າອອກ ຂອງສາມປະເທດອາຊຽນ ກໍລະນີສຶກສາ ສປປ ລາວ-ລາຊະອານາຈັກໄທ-ສສ ຫວຽດນາມ ໄປ ສປ ຈີນ. ພາກວິຊາເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ. ຫຼວງພະບາງ: ບົດໂຄງການຈົບຊັ້ນປະລິນຍາຕີ, ສາຂາທຸລະກິດລະຫວ່າງປະເທດ, ມະຫາວິທະຍາໄລສຸພານຸວົງ.

ກະຊວງອຸດສາຫະກຳ ແລະ ການຄ້າ (2020). ສະຖິຕິການສົ່ງອອກ ແລະ ນຳເຂົ້າສິນຄ້າ ຂອງ ສປປ ລາວ 2016-2020. Available: https://dimex.moic.gov.la/index.php/statistic

ທະນາຄານແຫ່ງ ສປປ ລາວ (2020). ບົດລາຍງານເສດຖະກິດປະຈຳປີ 2016-2019. ທະນາຄານແຫ່ງ ສປປ ລາວ. Available: https://www.bol.gov.la/annualreports.

ສູນສະຖິຕິແຫ່ງຊາດ (2020). ສະຖິຕິເສດຖະກິດປະຈຳປີ 2016-2020. ສູນສະຖິຕິແຫ່ງຊາດ. Available: https://laosis.lsb.gov.la

ສະຖິການການສົ່ງອອກ-ນຳເຂົ້າສິນຄ້າລະຫວ່າງ ສປປ ລາວ-ສປ ຈີນ ໄລຍະແຕ່ປີ 2016-2020. Available: https://www.trademap.org/Index.aspx

ກະຊວງແຜນການ ແລະ ການລົງທຶນ (2019). ສະຖິຕິການລົງທຶນຕ່າງປະເທດ 2016-2020. Available: https://www.mpi.gov.la/frontend/web/index.php

https://globthailand.com/laos-181120

ຕາຕະລາງທີ 1. ມູນຄ່າ ແລະ ສັດສ່ວນການຄ້າລວມຂອງ ສປປ ລາວ ແຕ່ໄລຍະປີ 2016-2020

| **ປີ** | **ລວມ** | **ສປ ຈີນ** | **ສັດສ່ວນ** | **ອັດຕາສ່ວນການເພິ່ງພາການຄ້າ (TD)** |
|---|---|---|---|---|
| 2016 | 8.979.215,29 | 1.854.044,13 | 20,65 | 28,33 |
| 2017 | 12.549.109,00 | 2.749.481,00 | 21,91 | 29,97 |
| 2018 | 11.708.549,00 | 1.513.698,00 | 12,93 | 30,77 |
| 2019 | 14.968.642,00 | 3.353.323,00 | 22,40 | 29,04 |
| 2020 | 14.087.942,00 | 2.761.055,00 | 19,60 | 31,61 |
| ລວມ | 62.293.457,29 | 12.231.601,13 | 97,49 | 149,72 |
| ສະເລ່ຍ | 12.458.691,46 | 2.446.320,23 | 19,50 | 29,94 |

ຕາຕາລາງທີ 2. ດັດສະນີຄວາມໄດ້ປຽບໂດຍປຽບທຽບ (RCA) ໃນການສົ່ງອອກສິນຄ້າຂອງ ສປປ ລາວ ໄປ ສປ ຈີນ

| ປະເພດສິນຄ້າ | ດັດສະນີຄວາມໄດ້ປຽບ (RCA) | | |
|---|---|---|---|
| | 2018 | 2019 | 2020 |
| ແຮ່ທາດ | 278.62 | 154.52 | 109.50 |
| ກາສທຳມະຊາດ | 12.97 | 12.29 | 25.97 |
| ຢາງພາລາ | 3.27 | 4.23 | 7.31 |
| ໄມ້ ແລະ ຜະລິດຕະພັນໄມ້ | 1.15 | 1.67 | 5.86 |
| ເຄື່ອງຈັກ ແລະ ອຸປະກອນໄຟຟ້າ | 0.32 | 0.26 | 0.29 |
| ສັດລ້ຽງ | 72.44 | 192.95 | 1.72 |
| ພືດຜັກຕ່າງໆ | 4.68 | 6.56 | 9.56 |

| | | | |
|---|---|---|---|
| ໝາກໄມ້ ແລະ ໝາກຖົ່ວ | 13.64 | 19.55 | 4.06 |
| ກາເຟ ແລະ ຊາ | 13.03 | 8.19 | 12.54 |
| ທັນຍາພືດ | 29.06 | 20.03 | 57.60 |

ຕາຕະລາງທີ 3. ຜົນການວິເຄາະການປັດໄຈທີ່ມີຜົນຕໍ່ການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ

| ຕົວປ່ຽນ | ຄ່າສໍາປະສິດ | ຄ່າຜັນປ່ຽນ ມາດຕະຖານ | ຄ່າທົດສອບ t | ລະດັບຄວາມສໍາຄັນ |
|---|---|---|---|---|
| (Constant) | 45.787 | 2.132 | 21.474 | 0.000 |
| $GDP_{Laos}$ | -1.335,00*** | 0.000 | -13.517 | 0.000 |
| $Invest_{china}$ | -1.207,00*** | 0.000 | -6.055 | 0.002 |
| EXC | 0,001** | 0.000 | 3.225 | 0.023 |
| INF | 1,229*** | 0.149 | 8.222 | 0.000 |
| FDI | -9.555,00*** | 0.000 | -4.208 | 0.008 |
| R-squared | | 0.9970 | | |
| Adjusted R-squared | | 0. 9940 | | |

ໝາຍເຫດ: (*) ແມ່ນລະດັບຄວາມສໍາຄັນ 10% (**) ແມ່ນລະດັບຄວາມສໍາຄັນ 5% (***) ແມ່ນລະດັບຄວາມສໍາຄັນ 1%.

ຕາຕະລາງທີ 4. ຜົນການວິເຄາະການແນວໂນ້ມການເພິ່ງພາທາງການຄ້າລະຫວ່າງ ສປປ ລາວ ກັບ ສປ ຈີນ

| ປີ | | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|
| ຄ່າພະຍາກອນ ດ້ວຍ Significant 0.05 | ການເພິ່ງພາການຄ້າ | 31.61 | 32.17 | 32.74 | 33.30 | 33.86 |
| | R-squared | 0.876 | | | | |
| | ການເພິ່ງພາການສົ່ງອອກ | 17.40 | 18.05 | 18.70 | 19.34 | 19.99 |
| | R-squared | 0.765 | | | | |
| | ການເພິ່ງພາການນໍາເຂົ້າ | 16.22 | 16.22 | 16.22 | 16.22 | 16.22 |
| | R-squared | 1.00 | | | | |

